**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ

ເລກທີ 274 /ລບ
ນະຄອນຫຼວງວຽງຈັນ, ວັນທີ 01.09.2023

# ດຳລັດ
# ວ່າດ້ວຍການເຄື່ອນໄຫວຂອງສຳນັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍສຳນັກງານຜູ້ຕາງໜ້າ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຈຳຢູ່ຕ່າງປະເທດ ສະບັບເລກທີ 58/ສພຊ, ລົງວັນທີ 11 ທັນວາ 2018;
- ອີງຕາມ ໜັງສືສະເໜີຂອງກະຊວງການຕ່າງປະເທດ ສະບັບເລກທີ 4635/ຕປທ.ສຍກ.4, ລົງວັນທີ 24 ສິງຫາ 2023.

**ລັດຖະບານ ອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວຂອງສຳນັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນສູງ ແນໃສ່ຮັບປະກັນການປະຕິບັດນະໂຍບາຍການຕ່າງປະເທດ ແລະ ເພີ່ມທະວີການເຊື່ອມໂຍງດ້ານເສດຖະກິດຂອງ ສປປ ລາວ ກັບສາກົນ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການເຄື່ອນໄຫວຂອງສຳນັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ**

ການເຄື່ອນໄຫວຂອງສຳນັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ ແມ່ນ ການນຳໃຊ້ທ່າແຮງດ້ານການຈັດຕັ້ງ, ທີ່ຕັ້ງ ແລະ ພາລະບົດບາດຂອງສຳນັກງານຜູ້ຕາງໜ້າ ທີ່ເປັນອົງການຕາງໜ້າທາງການ ໃຫ້ແກ່ ສປປ ລາວ ໃນການພົວພັນກັບປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສຳນັກງານຜູ້ຕາງໜ້າ** ໝາຍເຖິງ ສຳນັກງານຜູ້ຕາງໜ້າ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ທີ່ເປັນອົງການຕາງໜ້າທາງການໃຫ້ແກ່ ສປປ ລາວ ຢູ່ຕ່າງປະເທດ ໃນການພົວພັນກັບປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ ຊຶ່ງລວມມີ ສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່, ສະຖານກົງສຸນ, ສຳນັກງານຜູ້ຕາງໜ້າຖາວອນ ແລະ ສຳນັກງານທີ່ມີຊື່ອື່ນ;

2. **ປະເທດທີ່ຮັບ** ໝາຍເຖິງ ປະເທດບ່ອນທີ່ສຳນັກງານຜູ້ຕາງໜ້າມີຫ້ອງການຕັ້ງຢູ່ ແລະ ປະເທດອື່ນ ທີ່ສຳນັກງານຜູ້ຕາງໜ້າຮັບຜິດຊອບ;

3. **ອົງການຈັດຕັ້ງສາກົນ** ໝາຍເຖິງ ອົງການຈັດຕັ້ງລະຫວ່າງລັດຖະບານ;

4. **ກົດໝາຍສາກົນ** ໝາຍເຖິງ ຫຼັກການ ແລະ ລະບຽບການ ທີ່ໄດ້ກຳນົດໄວ້ໃນສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ລວມທັງກົດປະເພນີສາກົນ (Rules of Customary International Law) ທີ່ຄຸ້ມຄອງສາຍພົວພັນສາກົນ.

### ມາດຕາ 4 ຫຼັກການ ກ່ຽວກັບການເຄື່ອນໄຫວຂອງສຳນັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ

ການເຄື່ອນໄຫວຂອງສຳນັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດ ແນວທາງ ນະໂຍບາຍ ພາຍໃນ ແລະ ການຕ່າງປະເທດຂອງ ສປປ ລາວ;
2. ເຄົາລົບ ແລະ ປະຕິບັດ ລັດຖະທຳມະນູນ, ກົດໝາຍຂອງ ສປປ ລາວ, ກົດໝາຍຂອງປະເທດທີ່ຮັບ ແລະ ກົດໝາຍສາກົນ;
3. ສອດຄ່ອງກັບ ແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂະແໜງການ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ໃນແຕ່ລະໄລຍະ;
4. ເຄື່ອນໄຫວຢ່າງລວມສູນ ແລະ ເປັນເອກະພາບ ບົນພື້ນຖານການສະເໜີຢ່າງເປັນທາງການຂອງພາກລັດ ແລະ ພາກທຸລະກິດຂອງ ສປປ ລາວ, ປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ;
5. ນຳໃຊ້ທ່າແຮງດ້ານ ການຈັດຕັ້ງ, ທີ່ຕັ້ງ ແລະ ພາລະບົດບາດຂອງສຳນັກງານຜູ້ຕາງໜ້າທີ່ເປັນອົງການຕາງໜ້າທາງການໃຫ້ແກ່ ສປປ ລາວ ໃນການພົວພັນກັບປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ ຢ່າງເຕັມສ່ວນ.

### ມາດຕາ 5 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງ ສປປ ລາວ ທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງສຳນັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ.

## ໝວດທີ 2
## ການເຄື່ອນໄຫວຂອງສຳນັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ

### ມາດຕາ 6 ການ ສະໜອງ, ໂຄສະນາ ເຜີຍແຜ່ ແລະ ແລກປ່ຽນ ຂໍ້ມູນ ຂ່າວສານ ເພື່ອພັດທະນາເສດຖະກິດຂອງຊາດ

ໃນການ ສະໜອງ, ໂຄສະນາ ເຜີຍແຜ່ ແລະ ແລກປ່ຽນ ຂໍ້ມູນ ຂ່າວສານ ເພື່ອພັດທະນາເສດຖະກິດຂອງຊາດ ໃຫ້ສຳນັກງານຜູ້ຕາງໜ້າ ປະຕິບັດ ດັ່ງນີ້:

ກ. ຊອກຮູ້, ສຶກສາ ແລະ ສະໜອງ ຂໍ້ມູນ ຂ່າວສານ ທີ່ກ່ຽວຂ້ອງກັບເສດຖະກິດຂອງປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ ໃຫ້ພົນລະເມືອງລາວ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງ ສປປ ລາວ ດັ່ງນີ້:

1. ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ, ຂີດຄວາມສາມາດ, ກົນໄກ, ທ່າອ່ຽງການພັດທະນາເສດຖະກິດ, ທ່າແຮງດ້ານເສດຖະກິດ, ການຄ້າ, ການລົງທຶນ, ການເງິນ, ເງິນຕາ, ກະສິກຳ, ປ່າໄມ້, ການພັດທະນາຊົນນະບົດ, ການຊ່ວຍເຫຼືອ ເພື່ອການພັດທະນາ, ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳໃໝ່, ໂອກາດການເຂົ້າເຖິງ ແລະ ນຳໃຊ້ ເຕັກໂນໂລຊີ, ການປົກປັກຮັກສາສິ່ງແວດລ້ອມ, ການສຶກສາ, ສາທາລະນະສຸກ, ການຝຶກອົບຮົມ, ການທ່ອງທ່ຽວ, ການຮ່ວມມືໃນການນຳໃຊ້ຊັບພະຍາກອນມະນຸດ ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງ;

2. ທ່າແຮງ ແລະ ພາກປະຕິບັດໃນການດຳເນີນທຸລະກິດ ແລະ ຕະຫຼາດຂອງປະເທດທີ່ຮັບ ແລະ ຄູ່ຮ່ວມມືຕ່າງປະເທດ;

3. ສະພາບການພັດທະນາເສດຖະກິດ ລວມທັງບັນຫາທີ່ພົວພັນກັບຂະບວນການເຊື່ອມໂຍງເສດຖະກິດກັບສາກົນ, ປະສົບການໃນການເຂົ້າຮ່ວມ ແລະ ເຄື່ອນໄຫວຂອງປະເທດທີ່ຮັບ ຢູ່ອົງການທີ່ກ່ຽວຂ້ອງກັບເສດຖະກິດ ແລະ ການເງິນ ພາກພື້ນ ແລະ ສາກົນ;

4. ນະໂຍບາຍ, ການຕົກລົງທີ່ສຳຄັນ ແລະ ມີລັກສະນະຍຸດທະສາດໃໝ່ ຊຶ່ງອາດສົ່ງຜົນກະທົບຕໍ່ເສດຖະກິດຂອງລາວ ພ້ອມທັງສະເໜີມາດຕະການທີ່ເໝາະສົມ.

ຂ. ໂຄສະນາ ເຜີຍແຜ່ ຂໍ້ມູນ ຂ່າວສານ ດ້ານເສດຖະກິດ ແລະ ຂໍ້ມູນອື່ນ ທີ່ພົວພັນກັບເສດຖະກິດຂອງ ສປປ ລາວ ຢູ່ປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ ດັ່ງນີ້:

1. ແນວທາງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ;

2. ທ່າແຮງບົ່ມຊ້ອນ, ກາລະໂອກາດການຮ່ວມມືໃນຂົງເຂດເສດຖະກິດ, ການຄ້າ, ການລົງທຶນ, ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳໃໝ່, ການທ່ອງທ່ຽວ, ແຮງງານ ແລະ ຂົງເຂດອື່ນ ລວມທັງສະພາບແວດລ້ອມຂອງການດຳເນີນທຸລະກິດ ແລະ ການລົງທຶນຢູ່ ສປປ ລາວ;

3. ສະພາບລວມດ້ານ ການເມືອງ, ເສດຖະກິດ-ສັງຄົມ, ວັດທະນະທຳອັນດີງາມຂອງຊາດ ແລະ ທຳມະຊາດອັນສວຍງາມ;

4. ຄວາມສາມາດ ແລະ ຄວາມຮຽກຮ້ອງຕ້ອງການໃນການຮ່ວມມືຂອງກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງຂັ້ນທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

ຄ. ຮ່ວມມືກັບສາກົນ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ຝຶກອົບຮົມ, ສຳມະນາ ຍົກລະດັບຄວາມຮູ້, ຄວາມສາມາດດ້ານວິຊາການ ເພື່ອຮັບປະກັນຄຸນນະພາບ, ປະສິດທິພາບ ແລະ ປະສິດທິຜົນຂອງວຽກງານດັ່ງກ່າວ.

**ມາດຕາ 7 ການເຂົ້າຮ່ວມເຄື່ອນໄຫວເສດຖະກິດກັບສາກົນ**

ໃນການເຂົ້າຮ່ວມເຄື່ອນໄຫວເສດຖະກິດກັບສາກົນ ໃຫ້ສຳນັກງານຜູ້ຕາງໜ້າ ປະຕິບັດ ດັ່ງນີ້:

1. ປະສານສົມທົບກັບ ກະຊວງແຜນການ ແລະ ການລົງທຶນ ໃນການປະຕິບັດໂຄງການລະດົມ ແລະ ສົ່ງເສີມການລົງທຶນ; ໂຄສະນາ ເຜີຍແຜ່ ຢູ່ປະທດທີ່ຮັບ ກ່ຽວກັບກາລະໂອກາດ ແລະ ສະພາບແວດລ້ອມການລົງທຶນໂດຍກົງຈາກຕ່າງປະເທດ (FDI) ຢູ່ ສປປ ລາວ ໂດຍສອດຄ່ອງກັບຍຸດທະສາດ, ນະໂຍບາຍ ແລະ ບັນຊີໂຄງການທີ່ຕ້ອງການການລົງທຶນໂດຍກົງຈາກຕ່າງປະເທດ ໃນແຕ່ລະໄລຍະ ລວມທັງລະດົມຂົນຂວາຍການຊ່ວຍເຫຼືອທາງການ ເພື່ອການພັດທະນາ ຢູ່ປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ ໂດຍສອດຄ່ອງກັບແຜນການ, ແຜນງານ ຫຼື ໂຄງການບູລິມະສິດ ທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ;

2. ປະສານສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ ໃນການຊຸກຍູ້, ສົ່ງເສີມການພັດທະນາຕະຫຼາດສິນຄ້າຂອງ ສປປ ລາວ ດ້ວຍການຊອກຫາຕະຫຼາດສົ່ງອອກສິນຄ້າ, ຈັດກິດຈະກຳສົ່ງເສີມການຄ້າ ແລະ ງານວາງສະແດງສິນຄ້າ ແລະ ກິດຈະກຳອື່ນທີ່ກ່ຽວຂ້ອງ ຢູ່ປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ;

3. ປະສານສົມທົບກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນການຊຸກຍູ້, ສົ່ງເສີມການພັດທະນາຕະຫຼາດແຮງງານຂອງ ສປປ ລາວ ດ້ວຍການຊອກຫາຕະຫຼາດແຮງງານ, ການເປີດກວ້າງ ແລະ ສ້າງສາຍພົວພັນ ແລະ ການຮ່ວມມື ເພື່ອສົ່ງອອກແຮງງານລາວ ຢູ່ປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ;

4. ປະສານສົມທົບກັບ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນການສົ່ງເສີມການຮ່ວມມືດ້ານການທ່ອງທ່ຽວຂອງ ສປປ ລາວ ດ້ວຍການໂຄສະນາ ເຜີຍແຜ່ ກ່ຽວກັບການທ່ອງທ່ຽວທີ່ເປັນທ່າແຮງຂອງ ສປປ ລາວ ຢູ່ປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ;

5. ປະສານສົມທົບກັບ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ກະຊວງສຶກສາທິການ ແລະ ກິລາ, ກະຊວງສາທາລະນະສຸກ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນການເພີ່ມທະວີການຮ່ວມມືດ້ານວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳໃໝ່, ການປົກປັກຮັກສິ່ງແວດລ້ອມ ລະຫວ່າງ ສປປ ລາວ ກັບປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ;

6. ປະສານສົມທົບກັບ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຂອງ ສປປ ລາວ ໃນການເຄື່ອນໄຫວເສດຖະກິດກັບສາກົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

7. ປະສານສົມທົບກັບ ການຈັດຕັ້ງທີ່ກ່ຽວຂ້ອງຂອງປະເທດທີ່ຮັບ ໃນການຢັ້ງຢືນຂໍ້ມູນການເຄື່ອນໄຫວດ້ານເສດຖະກິດ ແລະ ສະຖານະພາບທາງກົດໝາຍຂອງນິຕິບຸກຄົນ ຢູ່ປະເທດທີ່ຮັບ ຕາມການສະເໜີຂອງພົນລະເມືອງລາວ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງຂອງ ສປປ ລາວ.

## ມາດຕາ 8 ການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ເພື່ອເຂົ້າຮ່ວມເຄື່ອນໄຫວເສດຖະກິດກັບສາກົນ

ໃນການສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ເພື່ອເຂົ້າຮ່ວມເຄື່ອນໄຫວເສດຖະກິດກັບສາກົນ ໃຫ້ສຳນັກງານຜູ້ຕາງໜ້າ ປະຕິບັດ ດັ່ງນີ້:

1. ປະຕິບັດ ນະໂຍບາຍການຕ່າງປະເທດຂອງ ສປປ ລາວ ເພື່ອຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືກັບປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ ແລະ ອຳນວຍຄວາມສະດວກໃຫ້ການປະຕິບັດນະໂຍບາຍເປີດກວ້າງການເຂົ້າຮ່ວມເຄື່ອນໄຫວເສດຖະກິດກັບສາກົນ ແລະ ການພັດທະນາເສດຖະກິດ-ສັງຄົມຂອງຊາດ;

2. ສະເໜີ ນະໂຍບາຍ ແລະ ມາດຕະການ ທີ່ເໝາະສົມ ຕໍ່ພາກສ່ວນທີ່ກ່ຽວຂ້ອງຂອງ ສປປ ລາວ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມື ກັບປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ ໃນຂົງເຂດເສດຖະກິດ, ການຄ້າ, ການລົງທຶນ, ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳໃໝ່, ການທ່ອງທ່ຽວ, ແຮງງານ, ການປົກປັກຮັກສາສິ່ງແວດລ້ອມ;

3. ສະເໜີ ກະຊວງ ແລະ ອົງການລັດທຽບເທົ່າກະຊວງທີ່ກ່ຽວຂ້ອງ ພິຈາລະນາສະເໜີສ້າງສົນທິສັນຍາ ຫຼື ສັນຍາສາກົນ ກັບປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ ເພື່ອອຳນວຍຄວາມສະດວກໃຫ້ການຮ່ວມມືໃນຂົງເຂດເສດຖະກິດ.

## ມາດຕາ 9 ການສະໜັບສະໜູນພາກທຸລະກິດຂອງ ສປປ ລາວ ເພື່ອເຂົ້າຮ່ວມເຄື່ອນໄຫວເສດຖະກິດກັບສາກົນ

ໃນການສະໜັບສະໜູນພາກທຸລະກິດຂອງ ສປປ ລາວ ເພື່ອເຂົ້າຮ່ວມເຄື່ອນໄຫວເສດຖະກິດກັບສາກົນ ໃຫ້ສຳນັກງານຜູ້ຕາງໜ້າ ປະຕິບັດ ດັ່ງນີ້:

1. ສົ່ງເສີມ ການສ້າງສາຍພົວພັນກັບຄູ່ຮ່ວມມືຕ່າງປະເທດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແລະ ປະເທດທີ່ຮັບ;

2. ສະໜັບສະໜູນ ການຈັດຕັ້ງປະຕິບັດບັນດາກິດຈະກຳສົ່ງເສີມການລົງທຶນ, ການຄ້າ, ແຮງງານ, ການທ່ອງທ່ຽວ, ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳໃໝ່, ການປົກປັກຮັກສາສິ່ງແວດລ້ອມ ແລະ ດ້ານອື່ນທີ່ກ່ຽວຂ້ອງກັບຄູ່ຮ່ວມມືຕ່າງປະເທດ ຕາມກົດໝາຍ ແລະ ຕາມການສະເໜີຂອງພາກທຸລະກິດຂອງ ສປປ ລາວ.

**ມາດຕາ 10 ການອຳນວຍຄວາມສະດວກໃຫ້ຄົນເຊື້ອຊາດລາວຢູ່ຕ່າງປະເທດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ**

ສຳນັກງານຜູ້ຕາງໜ້າ ປະສານສົມທົບກັບການຈັດຕັ້ງທີ່ກ່ຽວຂ້ອງໃນການສ້າງ, ປັບປຸງ ແລະ ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ລະບຽບການຂອງ ສປປ ລາວ ເພື່ອສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍໃຫ້ຄົນເຊື້ອຊາດລາວຢູ່ຕ່າງປະເທດເຂົ້າມາລົງທຶນ ຫຼື ນຳເອົາຄວາມຮູ້ ຄວາມສາມາດ ມາພັດທະນາເສດຖະກິດ-ສັງຄົມຂອງຊາດ ພ້ອມທັງໃຫ້ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພວກກ່ຽວ.

**ມາດຕາ 11 ການປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ ແລະ ພາກທຸລະກິດຂອງ ສປປ ລາວ ຢູ່ຕ່າງປະເທດ**

ສຳນັກງານຜູ້ຕາງໜ້າ ຕ້ອງນຳໃຊ້ວິທີການ ແລະ ມາດຕະການທີ່ຈຳເປັນ ເພື່ອປົກປ້ອງຜົນປະໂຫຍດຂອງລັດ ສປປ ລາວ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພາກທຸລະກິດຂອງ ສປປ ລາວ ຢູ່ຕ່າງປະເທດ ໂດຍສອດຄ່ອງກັບກົດໝາຍຂອງ ສປປ ລາວ, ກົດໝາຍສາກົນ ແລະ ກົດໝາຍຂອງປະເທດທີ່ຮັບ ລວມທັງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການແກ້ໄຂຂໍ້ຂັດແຍ່ງດ້ານເສດຖະກິດ.

**ມາດຕາ 12 ການຄຸ້ມຄອງການເຄື່ອນໄຫວເສດຖະກິດກັບສາກົນ ຢູ່ຕ່າງປະເທດ**

ໃນການຄຸ້ມຄອງການເຄື່ອນໄຫວເສດຖະກິດກັບສາກົນຂອງພາກລັດ ແລະ ພາກທຸລະກິດ ຢູ່ປະເທດທີ່ຮັບ ຫຼື ອົງການຈັດຕັ້ງສາກົນ ໃຫ້ສຳນັກງານຜູ້ຕາງໜ້າ ປະຕິບັດ ດັ່ງນີ້:

1. ປະສານສົມທົບ ແລະ ຄຸ້ມຄອງ ຄະນະຜູ້ແທນຂອງ ສປປ ລາວ ທີ່ຖືກແຕ່ງຕັ້ງໄປເຄື່ອນໄຫວເສດຖະກິດກັບສາກົນ ຢູ່ປະເທດທີ່ຮັບ ຫຼື ອົງການຈັດຕັ້ງສາກົນ. ຄະນະຜູ້ແທນຂອງ ສປປ ລາວ ຕ້ອງແຈ້ງກ່ຽວກັບເນື້ອໃນ ແລະ ແຜນການເຄື່ອນໄຫວຂອງຕົນ ຢູ່ປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ ໃຫ້ສຳນັກງານຜູ້ຕາງໜ້າ ພາຍໃນເວລາ ເຈັດວັນ ລັດຖະການ ກ່ອນວັນເດີນທາງ ເພື່ອປະສານສົມທົບກັບອົງການທີ່ກ່ຽວຂ້ອງຂອງປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ ແລະ ພາຍຫຼັງສຳເລັດການເຄື່ອນໄຫວ ກໍຕ້ອງແຈ້ງຜົນການເຄື່ອນໄຫວຂອງຕົນ ໃຫ້ສຳນັກງານຜູ້ຕາງໜ້າ;

2. ເຂົ້າຮ່ວມຕິດຕາມການເຄື່ອນໄຫວເສດຖະກິດກັບສາກົນຂອງພາກລັດ ແລະ ພາກທຸລະກິດ ຢູ່ປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ;

3. ລາຍງານ ກ່ຽວກັບບັນຫາ ແລະ ສິ່ງທ້າທາຍທີ່ເກີດຂຶ້ນ ໃນການເຄື່ອນໄຫວເສດຖະກິດກັບສາກົນ ຢູ່ປະເທດທີ່ຮັບ ຫຼື ອົງການຈັດຕັ້ງສາກົນ ພ້ອມທັງສະເໜີວິທີການ, ມາດຕະການແກ້ໄຂໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງ ສປປ ລາວ ຢ່າງເປັນປົກກະຕິ ແລະ ທັນເວລາ;

4. ສະຫຼຸບ ແລະ ລາຍງານການເຄື່ອນໄຫວເສດຖະກິດກັບສາກົນຂອງພາກລັດ ແລະ ພາກທຸລະກິດ ຢູ່ປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ ຕໍ່ກະຊວງການຕ່າງປະເທດ ຢ່າງເປັນປົກກະຕິ.

## ໝວດທີ 3
## ຂໍ້ຫ້າມ

**ມາດຕາ 13 ຂໍ້ຫ້າມ ສຳລັບສຳນັກງານຜູ້ຕາງໜ້າ ແລະ ສະມາຊິກຂອງສຳນັກງານຜູ້ຕາງໜ້າ**

ຫ້າມ ສຳນັກງານຜູ້ຕາງໜ້າ ແລະ ສະມາຊິກຂອງສຳນັກງານຜູ້ຕາງໜ້າ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບທາງເສດຖະກິດ ແລະ ທຸລະກິດຂອງພາກລັດ ແລະ ພາກທຸລະກິດ ເວັ້ນເສຍແຕ່ໄດ້ຮັບອະນຸຍາດ;
2. ດຳລົງຕຳແໜ່ງໃດໜຶ່ງ ຫຼື ເປັນທີ່ປຶກສາໃຫ້ແກ່ພາກທຸລະກິດ;
3. ປອມແປງ, ບິດເບືອນ ຂໍ້ມູນທາງທຸລະກິດ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ສ້າງຄວາມເສຍຫາຍ ໃຫ້ແກ່ພາກລັດ ແລະ ພາກທຸລະກິດ;
4. ປະຕິບັດໜ້າທີ່ໂດຍບໍ່ມີຄວາມເປັນທຳ ແລະ ບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
5. ໃຫ້ ຫຼື ສະໜອງ ຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວເສດຖະກິດກັບສາກົນ;
6. ສວຍໃຊ້ ສິດ, ໜ້າທີ່ ແລະ ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍຂອງ ສປປ ລາວ, ກົດໝາຍຂອງປະເທດທີ່ຮັບ ແລະ ກົດໝາຍສາກົນ.

**ມາດຕາ 14 ຂໍ້ຫ້າມ ສຳລັບພາກທຸລະກິດທີ່ເຄື່ອນໄຫວເສດຖະກິດກັບສາກົນ ຢູ່ຕ່າງປະເທດ**

ຫ້າມ ພາກທຸລະກິດທີ່ເຄື່ອນໄຫວເສດຖະກິດກັບສາກົນ ຢູ່ຕ່າງປະເທດ ມີພຶດຕິກຳ ດັ່ງນີ້:

1. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ກ່ຽວກັບສະຖານະພາບ ແລະ ການເຄື່ອນໄຫວ ທຸລະກິດຂອງຕົນ;
2. ປອມແປງ, ບິດເບືອນ ຂໍ້ມູນສະເພາະຂອງຕົນ ເພື່ອຜົນປະໂຫຍດທາງທຸລະກິດ ຫຼື ສ້າງຄວາມ ເສັຍຫາຍໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
3. ປະຕິເສດການຮ່ວມມື ຫຼື ຂັດຂວາງການປະຕິບັດໜ້າທີ່ຂອງສຳນັກງານຜູ້ຕາງໜ້າ ແລະ ສະມາຊິກ ຂອງສຳນັກງານຜູ້ຕາງໜ້າ;
4. ສະເໜີໃຫ້ ຫຼື ໃຫ້ສິນບົນແກ່ ສຳນັກງານຜູ້ຕາງໜ້າ ແລະ ສະມາຊິກຂອງສຳນັກງານຜູ້ຕາງໜ້າ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍຂອງ ສປປ ລາວ, ກົດໝາຍຂອງປະເທດທີ່ຮັບ ແລະ ກົດໝາຍສາກົນ.

## ໝວດທີ 4
## ການຄຸ້ມຄອງ

**ມາດຕາ 15 ອົງການຄຸ້ມຄອງ**

ກະຊວງການຕ່າງປະເທດ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງ ໃນການຄຸ້ມຄອງການເຄື່ອນໄຫວ ຂອງສຳນັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ.

**ມາດຕາ 16 ສິດ ແລະ ໜ້າທີ່ຂອງກະຊວງການຕ່າງປະເທດ**

ໃນການຄຸ້ມຄອງການເຄື່ອນໄຫວຂອງສໍານັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ ກະຊວງການຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງ ນະໂຍບາຍ, ແຜນຍຸດທະສາດ, ນິຕິກໍາ ກ່ຽວກັບການເຄື່ອນໄຫວຂອງສໍານັກງານຜູ້ຕາງໜ້າ ເພື່ອຮັບໃຊ້ການພັດທະນາເສດຖະກິດຂອງຊາດ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ນິຕິກໍາ ກ່ຽວກັບການເຄື່ອນໄຫວຂອງສໍານັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ ເປັນ ແຜນການ, ແຜນງານ, ໂຄງການ, ກິດຈະກໍາ ລະອຽດ ແລະ ຈັດຕັ້ງປະຕິບັດ;
3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ນິຕິກໍາ ກ່ຽວກັບການເຄື່ອນໄຫວຂອງສໍານັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ ໃຫ້ກວ້າງຂວາງ ແລະ ທົ່ວເຖິງ;
4. ຄຸ້ມຄອງ, ຊີ້ນໍາ ແລະ ຕິດຕາມ ກວດກາການເຄື່ອນໄຫວຂອງສໍານັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ;
5. ສ້າງ ກົນໄກຮ່ວມມື ແລະ ປະສານງານກັບ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
6. ມອບໝາຍໜ້າທີ່ສະເພາະໃຫ້ແຕ່ລະສໍານັກງານຜູ້ຕາງໜ້າ ເພື່ອເຄື່ອນໄຫວຮັບໃຊ້ການພັດທະນາເສດຖະກິດຂອງຊາດ;
7. ຈັດຕັ້ງ ແລະ ຊີ້ນໍາ ການຮ່ວມມື ແລະ ການປະສານງານ ລະຫວ່າງ ສໍານັກງານຜູ້ຕາງໜ້າ ກັບການຈັດຕັ້ງທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ຕ່າງປະເທດ ກ່ຽວກັບການເຄື່ອນໄຫວເສດຖະກິດກັບສາກົນ;
8. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວຂອງສໍານັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດຕໍ່ລັດຖະບານ ຢ່າງເປັນປົກກະຕິ;
9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 17 ສິດ ແລະ ໜ້າທີ່ຂອງກະຊວງ, ອົງການລັດທຽບເທົ່າກະຊວງ**

ໃນການຄຸ້ມຄອງການເຄື່ອນໄຫວຂອງສໍານັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ ກະຊວງ, ອົງການລັດທຽບເທົ່າກະຊວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ປະສານສົມທົບກັບກະຊວງການຕ່າງປະເທດ ໃນການຄຸ້ມຄອງ ແລະ ຊີ້ນໍາ ພະນັກງານຂອງຕົນທີ່ໄດ້ຮັບການແຕ່ງຕັ້ງໃຫ້ໄປປະຈໍາການຢູ່ສໍານັກງານຜູ້ຕາງໜ້າ ເພື່ອຮັບປະກັນໃຫ້ພວກກ່ຽວປະຕິບັດແນວທາງນະໂຍບາຍ ການຕ່າງປະເທດຂອງ ສປປ ລາວ ຢ່າງຖືກຕ້ອງ ລວມທັງເຄົາລົບ ແລະ ປະຕິບັດ ກົດໝາຍຂອງ ສປປ ລາວ, ກົດໝາຍຂອງປະເທດທີ່ຮັບ ແລະ ກົດໝາຍສາກົນ;
2. ສະໜອງ ຂໍ້ມູນ ຂ່າວສານ ຕາມການສະເໜີຂອງສໍານັກງານຜູ້ຕາງໜ້າ ຢ່າງທັນເວລາ;
3. ປະສານສົມທົບກັບກະຊວງການຕ່າງປະເທດ ໃນການປະເມີນການເຄື່ອນໄຫວຂອງສໍານັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ ພ້ອມທັງສະເໜີວິທີການ ແລະ ມາດຕະການໃນການສົ່ງເສີມວຽກງານດັ່ງກ່າວ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ;
4. ປະສານສົມທົບກັບສໍານັກງານຜູ້ຕາງໜ້າ ໃນການສ້າງແຜນການ, ແຜນງານ, ໂຄງການ ແລະ ກິດຈະກໍາ ກ່ຽວກັບການເຄື່ອນໄຫວເສດຖະກິດກັບສາກົນ ທີ່ພົວພັນກັບຂົງເຂດເຕັກນິກ ແລະ ວິຊາການຂອງຕົນ ລວມທັງຊີ້ນໍາດ້ານເຕັກນິກ ແລະ ວິຊາການ ໃຫ້ແກ່ລັດຖະກອນທີ່ຕົນສົ່ງໄປປະຈໍາການ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ;
5. ແຈ້ງໃຫ້ສໍານັກງານຜູ້ຕາງໜ້າ ໂດຍຜ່ານກະຊວງການຕ່າງປະເທດ ກ່ຽວກັບເນື້ອໃນ ແລະ ແຜນການເຄື່ອນໄຫວຂອງຄະນະຜູ້ແທນຕົນ ທີ່ຈະໄປເຄື່ອນໄຫວເສດຖະກິດກັບສາກົນ ຢູ່ປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ ລວມທັງການຈັດກິດຈະກໍາຕ່າງໆ;
6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງອົງການປົກຄອງຂັ້ນແຂວງ**

ໃນການຄຸ້ມຄອງການເຄື່ອນໄຫວຂອງສຳນັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ ອົງການປົກຄອງຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສະໜອງ ຂໍ້ມູນ ຂ່າວສານ ຕາມການສະເໜີຂອງສຳນັກງານຜູ້ຕາງໜ້າ;
2. ປະສານສົມທົບກັບກະຊວງການຕ່າງປະເທດ ໃນການປະເມີນການເຄື່ອນໄຫວຂອງສຳນັກງານຜູ້ຕາງໜ້າ ເພື່ອພັດທະນາເສດຖະກິດຂອງຊາດ ພ້ອມທັງສະເໜີມາດຕະການໃນການສົ່ງເສີມວຽກງານດັ່ງກ່າວ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ;
3. ປະສານສົມທົບກັບສຳນັກງານຜູ້ຕາງໜ້າ ໂດຍຜ່ານກະຊວງການຕ່າງປະເທດ ໃນການຈັດກິດຈະກຳທີ່ກ່ຽວຂ້ອງກັບການເຄື່ອນໄຫວເສດຖະກິດກັບສາກົນ ຢູ່ປະເທດທີ່ຮັບ ແລະ/ຫຼື ອົງການຈັດຕັ້ງສາກົນ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 19 ງົບປະມານ**

ສຳນັກງານຜູ້ຕາງໜ້າ ໄດ້ຮັບການຈັດສັນງົບປະມານ ຈາກລັດຖະບານ ແລະ ງົບປະມານຈາກແຫຼ່ງອື່ນທີ່ຖືກຕ້ອງຕາມກົດໝາຍ ຕ້ອງຈັດຕັ້ງປະຕິບັດໃຫ້ຖືກຕ້ອງ, ສອດຄ່ອງ ຕາມລະບຽບຫຼັກການການເງິນທີ່ມີ ແລະ ກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ.

ເປົ້າໝາຍການນຳໃຊ້ງົບປະມານ ມີ ດັ່ງນີ້:

1. ໂຄສະນາ ເຜີຍແຜ່ ກ່ຽວກັບ ສປປ ລາວ ແນໃສ່ຍົກສູງພາບພົດ ແລະ ທີ່ຕັ້ງຂອງປະເທດ, ສ້າງໂອກາດໃນການດຶງດູດການລົງທຶນ, ການຄ້າ, ການທ່ອງທ່ຽວ, ການສົ່ງອອກແຮງງານ ແລະ ການຂົນຂວາຍການຊ່ວຍເຫຼືອທາງການ ເພື່ອການພັດທະນາ;
2. ເຄື່ອນໄຫວ ພົບປະ ແລະ ສ້າງເຄືອຂ່າຍ ກັບ ບຸກຄົນ, ນິຕິບຸກຄົນ ທີ່ມີບົດບາດ ແລະ ອິດທິພົນທາງດ້ານການເມືອງ, ເສດຖະກິດ-ການເງິນ ເພື່ອຍາດແຍ່ງຄູ່ຮ່ວມມືຕ່າງປະເທດ ແນ່ໃສ່ສົ່ງເສີມການເຄື່ອນໄຫວເສດຖະກິດກັບສາກົນ;
3. ສະໜັບສະໜູນ ພາກລັດ ແລະ ພາກທຸລະກິດຂອງ ສປປ ລາວ ໃນການຊອກຮູ້, ເຂົ້າໃຈ ກ່ຽວກັບຕະຫຼາດ ແລະ ໂອກາດດຳເນີນທຸລະກິດ; ສະໜັບສະໜູນການຈັດຕັ້ງກິດຈະກຳສົ່ງເສີມເສດຖະກິດກັບສາກົນ; ການຢັ້ງຢືນ ແລະ ປະເມີນຄູ່ຮ່ວມມືຕ່າງປະເທດ, ສະໜອງຂໍ້ມູນຂ່າວສານ, ແກ້ໄຂຂໍ້ຂັດແຍ່ງທີ່ກ່ຽວຂ້ອງກັບການເຄື່ອນໄຫວເສດຖະກິດກັບສາກົນ;
4. ຊອກຮູ້, ເກັບກຳ ແລະ ສັງລວມຂໍ້ມູນທາງດ້ານເສດຖະກິດ, ວິທະຍາສາດ, ເຕັກໂນໂລຊີ, ການສຶກສາ, ການກໍ່ສ້າງຊັບພະຍາກອນມະນຸດ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ; ສະໜັບສະໜູນການຄົ້ນຄວ້າ, ການໃຫ້ຄຳປຶກສາໃນການສ້າງນະໂຍບາຍພັດທະນາເສດຖະກິດ;
5. ສະໜັບສະໜູນການເຊື້ອເຊີນ ຊ່ຽວຊານ, ນັກຄົ້ນຄວ້າ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມໃນການກໍ່ສ້າງ, ບຳລຸງ, ຍົກລະດັບຄວາມສາມາດ ໃຫ້ພະນັກງານທີ່ຈະໄປປະຕິບັດໜ້າທີ່ ກ່ຽວກັບການເຄື່ອນໄຫວເສດຖະກິດກັບສາກົນ;
6. ພິມ ແລະ ສະໜອງ ຜະລິດຕະພັນ ເພື່ອຮັບໃຊ້ໃຫ້ແກ່ການໂຄສະນາ ເຜີຍແຜ່ ການເຄື່ອນໄຫວເສດຖະກິດກັບສາກົນ;
7. ຈັດກິດຈະກຳອື່ນ ຕາມການຊີ້ນຳຂອງລັດຖະບານ.

**ມາດຕາ 20 ການຈັດຕັ້ງປະຕິບັດ**

ກະຊວງການຕ່າງປະເທດ ເປັນເຈົ້າການປະສານສົມທົບກັບສຳນັກງານຜູ້ຕາງໜ້າ, ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ສຳນັກງານຜູ້ຕາງໜ້າ, ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 21 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 12 ຕຸລາ 2023 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**